ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ: 122 /ນຍ.

ນະຄອນຫຼວງວຽງຈັນ, ວັນທີ: 03.03.2010

# ດຳລັດ

## ຂອງນາຍົກລັດຖະມົນຕີ

**ວ່າດ້ວຍ ການສ້າງຕັ້ງ, ດັດແກ້ ເຂດເນື້ອທີ່ປ່າສະຫງວນນາກາຍ-ນ້ຳເທີນ, ເຂດເຊື່ອມຕໍ່, ເຂດເນື້ອທີ່ອ່າງເກັບນ້ຳ ເຂື່ອນໄຟຟ້ານ້ຳເທີນ-2, ເຂດຍົກຍ້າຍຈັດສັນ ແລະ ເຂດປ່າໄມ້ ສຳລັບປະຊາຊົນ ທີ່ຖືກຜົນກະທົບໂດຍກົງ ຈາກໂຄງການກໍ່ສ້າງເຂື່ອນໄຟຟ້າ ນ້ຳເທີນ-2**

- ອີງຕາມກົດໝາຍ ວ່າດ້ວຍ ລັດຖະບານ ແຫ່ງ ສປປລາວ ອີງຕາມກົດໝາຍ ວ່າດ້ວຍ ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບ ເລກທີ 02/ສພຊ, ລົງວັນທີ 06/05/2003.
- ອີງຕາມກົດໝາຍ ວ່າດ້ວຍ ປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມກົດໝາຍ ວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳ ສະບັບເລກທີ 126/ສພຊ, ລົງວັນທີ 2 ພະຈິກ 1996.
- ອີງຕາມກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 02/99/ສພຊ, ລົງວັນທີ 3 ເມສາ 1999.
- ອີງຕາມສັນຍາພັດທະນາໂຄງການໄຟຟ້ານ້ຳຕົກ ນ້ຳເທີນ-2 ລະຫວ່າງລັດຖະບານ ແຫ່ງ ສປປລາວ ແລະ ກຸ່ມບໍລິສັດພັດທະນາໂຄງການໄຟຟ້ານ້ຳເທີນ-2 ສະບັບລົງວັນທີ 16/11/1998.
- ອີງຕາມການສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 29 /ກປ, ລົງວັນທີ 26.02.2010

### ນາຍົກລັດຖະມົນຕີ ອອກດຳລັດ

ມາດຕາ 1: ເພື່ອສືບຕໍ່ຈັດຕັ້ງປະຕິບັດ ໂຄງການເຂື່ອນໄຟຟ້ານ້ຳເທີນ 2 ໃຫ້ມີຄວາມສອດຄ່ອງ ແລະ ແທດເໝາະກັບສະພາບການຕົວຈິງ, ດຳລັດສະບັບນີ້ ຈຶ່ງໄດ້ມີການກຳນົດ ເຂດຕົ້ນຕໍ ທີ່ຕິດພັນກັບໂຄງການ ດັ່ງກ່າວ ດັ່ງຕໍ່ໄປນີ້:

1.1. ເຂດປ່າສະຫງວນ ນາກາຍ ນ້ຳເທີນ.

1.2. ເຂດເຊື່ອມຕໍ່ລະຫວ່າງ ປ່າສະຫງວນ ນາກາຍ-ນ້ຳເທີນ ກັບ ປ່າສະຫງວນ ພູຫີນປູນ.

1.3. ເຂດເຊື່ອມຕໍ່ລະຫວ່າງ ປ່າສະຫງວນ ນາກາຍ-ນ້ຳເທີນ ກັບ ປ່າສະຫງວນ ພູຫີນໜາມໜໍ່.

1.4. ເຂດອ່າງເກັບນ້ຳ ໃນລະດັບນ້ຳໃນອ່າງສູງສຸດ 538 ແມັດເໜືອໜ້ານ້ຳທະເລ ເພື່ອຮັບໃຊ້ໃຫ້ແກ່ການຜະລິດໄຟຟ້ານ້ຳເທີນ-2. ສ່ວນເຂດອື່ນໆທີ່ຮັບໃຊ້ໃຫ້ແກ່ໂຄງການ ຈະມີການຕົກລົງກັນຕ່າງຫາກ ລະຫວ່າງ ລັດຖະບານ ແລະ ຜູ້ລົງທຶນ.

1.5. ເຂດຍົກຍ້າຍຈັດສັນ ແລະ ເຂດປ່າໄມ້ ຊຶ່ງເປັນແຫຼ່ງຈັດສັນອາຊີບ ໃຫ້ແກ່ປະຊາຊົນ ທີ່ຖືກກະທົບ ໂດຍກົງ ໂດຍໂຄງການນ້ຳເທີນ-2.

**ມາດຕາ 2:** ວ່າດ້ວຍການກຳນົດຂອບເຂດ

2.1. ການກຳນົດຂອບເຂດ ແມ່ນອີງໃສ່ແຜນທີ່ມາດຕາສ່ວນ 1:100.000 ໂດຍເອົາເສັ້ນຂະໜານ ແລະ ເສັ້ນແວງ ລວມຈຸດພິກັດ ໃນແຕ່ລະເຂດ ເປັນຕົ້ນຕໍ ເພື່ອສົມທຽບໃສ່ພື້ນທີ່ຕົວຈິງ ແມ່ນໄດ້ເອົາສາຍພູ, ສາຍຫ້ວຍ, ແມ່ນ້ຳ, ເສັ້ນທາງ, ຈຸດລະດັບຕ່ຳສຸດ ຫຼື ສູງສຸດ ເປັນຂີດໝາຍ ເພື່ອເຮັດໃຫ້ການສຳຫຼວດພື້ນທີ່ໄດ້ລະອຽດ, ການຈັດຕັ້ງປະຕິບັດ ໂຄງການໄດ້ຖືກຕ້ອງ, ອຳນາດການປົກຄອງທ້ອງຖິ່ນ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ ແລະ ເຂົ້າໃຈງ່າຍ ພ້ອມທັງຮ່ວມມື ໃນການຈັດຕັ້ງປະຕິບັດ ເປັນຢ່າງດີ.

2.2. ຂອບເຂດ ແລະ ເນື້ອທີ່ ຂອງເຂດທີ່ໄດ້ລະບຸໄວ້ ໃນມາດຕາ 1 ຂອງດຳລັດສະບັບນີ້ ໃຫ້ເບິ່ງແຜນທີ່ ແລະ ເອກະສານຕິດຄັດ ກັບດຳລັດສະບັບນີ້ ແລະ ເປັນພາກສ່ວນໜຶ່ງ ຂອງ ດຳລັດສະບັບນີ້.

**ມາດຕາ 3:** ເນື້ອທີ່ເຂດແດນ ປ່າສະຫງວນແຫ່ງຊາດ ນາກາຍ-ນ້ຳເທີນ ແລະ ເນື້ອທີ່ອ່າງເກັບນ້ຳ ໃນເຂດປ່າສະຫງວນ ທີ່ຕັດອອກຈາກຂອບເຂດເນື້ອທີ່ປ່າສະຫງວນ ນາກາຍ-ນ້ຳເທີນ.

ເນື້ອທີ່: 353.200 ເຮັກຕາ, ໃນນີ້:

- ແຂວງຄຳມ່ວນ: 326.130 ເຮັກຕາ,
- ແຂວງບໍລິຄຳໄຊ: 27.070 ເຮັກຕາ.

| | | ຈຸດໜຶ່ງ | ຈຸດສອງ |
|---|---|---|---|
| - ທິດເໜືອ: | ເສັ້ນແວງ: | 105° 09' 30''; | 105° 29' 21''. |
| | ເສັ້ນຂະໜານ | 18° 23' 23'' | 18° 12' 07''. |
| - **ທິດຕະວັນອອກ:** | ເສັ້ນແວງ: | 105° 29' 21''; | 105° 46' 00''. |
| | ເສັ້ນຂະໜານ | 18° 12' 07'' | 17° 40' 20''. |
| - ທິດໃຕ້: | ເສັ້ນແວງ: | 105° 46' 00''; | 105° 03' 39''. |
| | ເສັ້ນຂະໜານ | 17° 40' 20'' | 17° 51' 02''. |
| - ທິດຕະວັນຕົກ: | ເສັ້ນແວງ: | 105° 03' 39''; | 105° 09' 30''. |
| | ເສັ້ນຂະໜານ | 17° 51' 02'' | 18° 23' 23''. |

**ຍົກເວັ້ນ ເຂດພື້ນທີ່ ເບື້ອງຕະວັນອອກ ທີ່ຖືກນ້ຳຖ້ວມໃນລະດັບນ້ຳໃນອ່າງສູງສຸດ 538 ແມັດເໜືອໜ້ານ້ຳທະເລ ຊຶ່ງມີເນື້ອທີ່ທັງໝົດ 11.780 ເຮັກຕາ ທີ່ຕັດອອກ ຈາກເຂດປ່າສະຫງວນແຫ່ງຊາດ ນາກາຍ-ນ້ຳເທີນ ຊຶ່ງປະກອບມີ 05 ເຂດຄື:**

- <u>ເຂດທີ 1</u>: ເຂດກວາງເຕັ້ນ-ນ້ຳນຽນ: ເນື້ອທີ່ລວມ 7.062 ເຮັກຕາ, ຊຶ່ງມີທີ່ຕັ້ງ ແລະ ຈຸດພິກັດ ນອນໃນເສັ້ນຕາມແຜນທີ່ ແລະ ເອກະສານຕິດຄັດ ຂອງດຳລັດສະບັບນີ້ ຊຶ່ງຖືເປັນສ່ວນໜຶ່ງຂອງ ດຳລັດ ສະບັບນີ້.

- <u>ເຂດທີ 2</u>: ເຂດນ້ຳໂຊດ-ນ້ຳມອນ-ຫ້ວຍເຄິງ: ເນື້ອທີ່ລວມ 850 ເຮັກຕາ, ຊຶ່ງມີທີ່ຕັ້ງ ແລະ ຈຸດພິກັດ ນອນໃນເສັ້ນຕາມແຜນທີ່ ແລະ ເອກະສານຕິດຄັດ ຂອງດຳລັດສະບັບນີ້ ຊຶ່ງຖືເປັນ ສ່ວນໜຶ່ງຂອງ ດຳລັດ ສະບັບນີ້.

- <u>ເຂດທີ 3</u>: ເຂດນ້ຳສະງອງ-ນ້ຳສະນາບ: ເນື້ອທີ່ລວມ 321 ເຮັກຕາ, ຊຶ່ງມີທີ່ຕັ້ງ ແລະ ຈຸດພິກັດ ນອນໃນເສັ້ນຕາມແຜນທີ່ ແລະ ເອກະສານຕິດຄັດ ຂອງດຳລັດສະບັບນີ້ ຊຶ່ງຖືເປັນສ່ວນໜຶ່ງຂອງ ດຳລັດ ສະບັບນີ້.

- <u>ເຂດທີ 4</u>: ເຂດຫ້ວຍຕອງ-ກະໂອ້ຍ: ເນື້ອທີ່ລວມ 2.014 ເຮັກຕາ, ຊຶ່ງມີທີ່ຕັ້ງ ແລະ ຈຸດພິກັດ ນອນໃນເສັ້ນຕາມແຜນທີ່ ແລະ ເອກະສານຕິດຄັດ ຂອງດຳລັດສະບັບນີ້ ຊຶ່ງຖືເປັນສ່ວນໜຶ່ງຂອງ ດຳລັດ ສະບັບນີ້.

- <u>ເຂດທີ 5</u>: ເຂດນ້ຳອອນ: ເນື້ອທີ່ລວມ 1.533 ເຮັກຕາ, ຊຶ່ງມີທີ່ຕັ້ງ ແລະ ຈຸດພິກັດ ນອນໃນເສັ້ນຕາມແຜນທີ່ ແລະ ເອກະສານຕິດຄັດ ຂອງດຳລັດສະບັບນີ້ ຊຶ່ງຖືເປັນສ່ວນໜຶ່ງຂອງ ດຳລັດ ສະບັບນີ້.

ມາດຕາ 4: ເນື້ອທີ່ເຂດເຊື່ອມຕໍ່ປ່າສະຫງວນແຫ່ງຊາດ ນາກາຍ-ນ້ຳເທີນ ແລະ ປ່າສະຫງວນພູຫີນປູນ.

ເນື້ອທີ່ທັງໝົດ: 73.860 ເຮັກຕາ, ໃນນີ້:

- ແຂວງຄຳມ່ວນ: 37.310 ເຮັກຕາ
- ແຂວງບໍລິຄຳໄຊ: 36.550 ເຮັກຕາ.

| | | <u>ຈຸດໜຶ່ງ</u> | <u>ຈຸດສອງ</u> |
|---|---|---|---|
| - ທິດເໜືອ: | ເສັ້ນແວງ: | 104° 48' 45'' ; | 105° 03' 15''. |
| | ເສັ້ນຂະໜານ | 18° 04' 30'' | 17° 59' 35''. |
| - ທິດຕະວັນອອກ: | ເສັ້ນແວງ: | 105° 03' 15'' ; | 105° 03' 35''. |
| | ເສັ້ນຂະໜານ | 17° 59' 35'' | 17° 51' 10''. |
| - ທິດໃຕ້: | ເສັ້ນແວງ: | 105° 03' 35'' ; | 104° 57' 45''. |
| | ເສັ້ນຂະໜານ | 17° 51' 10'' | 17° 45' 50''. |
| - ທິດຕະວັນຕົກ: | ເສັ້ນແວງ: | 104° 57' 45'' ; | 104° 48' 45''. |
| | ເສັ້ນຂະໜານ | 17° 45' 50'' | 18° 04' 30''. |

ມາດຕາ 5: ເນື້ອທີ່ເຂດເຊື່ອມຕໍ່ປ່າສະຫງວນແຫ່ງຊາດ ນາກາຍ-ນ້ຳເທີນ ແລະ ປ່າສະຫງວນພູຫີນໜາມໜໍ່.

ເນື້ອທີ່ທັງໝົດ: 3.310 ເຮັກຕາ.

| | | <u>ຈຸດໜຶ່ງ</u> | <u>ຈຸດສອງ</u> |
|---|---|---|---|
| - ທິດເໜືອ: | ເສັ້ນແວງ: | 105° 46' 00'' ; | 105° 46' 17''. |

| | | | |
|---|---|---|---|
| | ເສັ້ນຂະໜານ | 17° 40' 20'' | 17° 40' 00''. |
| - ທິດຕະວັນອອກ: | ເສັ້ນແວງ: | 105° 46' 17''; | 105° 45' 38''. |
| | ເສັ້ນຂະໜານ | 17° 40' 00'' | 17° 35' 57''. |
| - ທິດໃຕ້: | ເສັ້ນແວງ: | 105° 45' 38''; | 105° 43' 09''. |
| | ເສັ້ນຂະໜານ | 17° 33' 57'' | 17° 34' 33''. |
| - ທິດຕະວັນຕົກ: | ເສັ້ນແວງ: | 104° 43' 09''; | 105° 46' 00''. |
| | ເສັ້ນຂະໜານ | 17° 34' 33'' | 17° 40' 20''. |

**ມາດຕາ 6:** ເນື້ອທີ່ຂອບເຂດອ່າງນ້ຳຖ້ວມໃນລະດັບສູງສຸດ 538 ແມັດເໜືອໜ້ານ້ຳທະເລ.

ເນື້ອທີ່ທັງໝົດ: 45.000 ເຮັກຕາ.

| | | ຈຸດໜຶ່ງ | ຈຸດສອງ |
|---|---|---|---|
| - ທິດເໜືອ: | ເສັ້ນແວງ: | 104° 56' 00''; | 105° 05' 00''. |
| | ເສັ້ນຂະໜານ | 17° 58' 00'' | 17° 53' 00''. |
| - ທິດຕະວັນອອກ: | ເສັ້ນແວງ: | 105° 05' 00''; | 105° 21' 40''. |
| | ເສັ້ນຂະໜານ | 17° 53' 00'' | 17° 37' 35''. |
| - ທິດໃຕ້: | ເສັ້ນແວງ: | 105° 21' 40''; | 104° 59' 00''. |
| | ເສັ້ນຂະໜານ | 17° 37' 35'' | 17° 46' 25''. |
| - ທິດຕະວັນຕົກ: | ເສັ້ນແວງ: | 104° 59' 00''; | 104° 56' 00''. |
| | ເສັ້ນຂະໜານ | 17° 46' 25'' | 17° 58' 00''. |

ໃນນີ້ ເພີ່ມເຂດພື້ນທີ່ອ່າງເກັບນ້ຳ ເບື້ອງຕະວັນອອກ ທີ່ຖືກນ້ຳຖ້ວມໃນລະດັບນ້ຳໃນອ່າງສູງສຸດ 538 ແມັດເໜືອໜ້ານ້ຳທະເລ ຊຶ່ງມີເນື້ອທີ່ທັງໝົດ 11.780 ເຮັກຕາ ເຂົ້າໃສ່ຕື່ມ.

**ມາດຕາ 7:** ເນື້ອທີ່ປ່າໄມ້ຈັດສັນໃຫ້ປະຊາຊົນຜູ້ຖືກກະທົບ ທີ່ຍົກຍ້າຍໄປຢູ່.

ເນື້ອທີ່ທັງໝົດ: 20.800 ເຮັກຕາ.

| | | ຈຸດໜຶ່ງ | ຈຸດສອງ |
|---|---|---|---|
| - ທິດເໜືອ: | ເສັ້ນແວງ: | 105° 03' 10''; | 105° 21' 40''. |
| | ເສັ້ນຂະໜານ | 17° 50' 40'' | 17° 37' 35''. |
| - ທິດຕະວັນອອກ: | ເສັ້ນແວງ: | 105° 21' 40''; | 105° 24' 35''. |
| | ເສັ້ນຂະໜານ | 17° 37' 35'' | 17° 36' 20''. |
| - ທິດໃຕ້: | ເສັ້ນແວງ: | 105° 24' 35''; | 104° 59' 00''. |
| | ເສັ້ນຂະໜານ | 17° 36' 20'' | 17° 46' 25''. |
| - ທິດຕະວັນຕົກ: | ເສັ້ນແວງ: | 104° 59' 00''; | 105° 03' 10''. |
| | ເສັ້ນຂະໜານ | 17° 46' 25'' | 17° 50' 40''. |

**ມາດຕາ 8:** ຈຸດປະສົງຕົ້ນຕໍ ຂອງເຂດເຊື່ອມຕໍ່ ແລະ ມາດຕະການ ຂໍ້ເກືອດຫ້າມທັງໝົດ ແມ່ນຖືເອົາຕາມ ມາດຕາ 3 ແລະ ມາດຕາ 4 ຂອງດຳລັດສະບັບເລກທີ 164/ນຍ, ລົງວັນທີ 29/10/1993 ວ່າດ້ວຍ ການສ້າງຕັ້ງປ່າສະຫງວນແຫ່ງຊາດ ທົ່ວປະເທດ.

**ມາດຕາ 9:** ເນື້ອທີ່ປ່າໄມ້ ຈະຈັດສັນເປັນບ້ານໃໝ່ ໃຫ້ປະຊາຊົນໄປຢູ່ ແມ່ນຖືກຈັດແບ່ງໃຫ້ປະຊາຊົນ ແຕ່ລະ ຄອບຄົວຕັ້ງບ້ານເຮືອນໃສ່ ພ້ອມທັງມອບໃຫ້ປະຊາຊົນຄຸ້ມຄອງ ນຳໃຊ້ແບບຍືນຍົງ ຕາມລະບຽບ ກົດໝາຍ.

**ມາດຕາ 10:** ຂອບເຂດອ່າງນ້ຳຖ້ວມໃນເສັ້ນລະດັບນ້ຳສູງສຸດ 538 ແມັດເໜືອໜ້ານ້ຳທະເລ ແມ່ນເພື່ອອະນາ ໄມ ຕັດໄມ້ອອກກ່ອນຕັນເຂື່ອນ ເພື່ອຮັບປະກັນຄຸນນະພາບນ້ຳ ແລະ ສິ່ງແວດລ້ອມ. ສ່ວນເຂດ ນ້ຳຈະຖ້ວມ ບ່ອນໃດທີ່ມີຄວາມຫຍຸ້ງຍາກ ໃນການກຳນົດລະດັບ ແລະ ໝາຍເຂດຕັດໄມ້ ແມ່ນຈະ ໄດ້ຕັດ ພາຍຫຼັງຕັນເຂື່ອນແລ້ວ ຕາມຂອບເຂດນ້ຳຖ້ວມຕົວຈິງ, **ການກຳນົດ ຂອບເຂດ ເພື່ອຕັດ ໄມ້ ໃນອ່າງເກັບນ້ຳ** ແມ່ນໃຫ້ຖືເອົາຕາມເສັ້ນລະດັບນ້ຳຖ້ວມສູງສຸດ 538 ແມັດ.

**ມາດຕາ 11:** ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບນຳອຳນາດການປົກຄອງທ້ອງຖິ່ນ ແລະ ກຸ່ມພັດທະ ນາໄຟຟ້ານ້ຳເທີນ-2 ດຳເນີນການສຳຫຼວດ ໝາຍຂອບເຂດ ໃສ່ພື້ນທີ່ຕົວຈິງ ໃຫ້ລະອຽດ ຈະແຈ້ງ. ໃຫ້ເຜີຍແຜ່ດຳລັດສະບັບນີ້ ໃຫ້ແກ່ພະນັກງານ, ປະຊາຊົນບັນດາເຜົ່າ ແລະ ບັນດາກຸ່ມຜູ້ພັດທະນາ ເຂື່ອນໄຟຟ້ານ້ຳເທີນ-2 ເພື່ອຮັບຊາບ ແລະ ປະຕິບັດ ຢ່າງເຂັ້ມງວດ ແລະ ເຂົ້າຮ່ວມ ໃນການ ຈັດຕັ້ງປະຕິບັດ ການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ໃຫ້ມີຄວາມຍືນຍົງຕະຫຼອດໄປ.

**ມາດຕາ 12:** ດຳລັດສະບັບນີ້ ມີຜົນສັກສິດ ແລະ ໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນ **ດຳລັດສະບັບເລກທີ 193/ນຍ, ລົງວັນທີ 29/12/2000.**

ນາຍົກລັດຖະມົນຕີ ແຫ່ງ ສປປລາວ

ບົວສອນ ບຸບຜາວັນ